ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ 0012 /ກງ

ນະຄອນຫຼວງວຽງຈັນ, ວັນທີ 03 ມັງກອນ 2025

# ຂໍ້ຕົກລົງເພີ່ມເຕີມ

## ວ່າດ້ວຍ ການປັບປຸງບາງມາດຕາ ຂອງ ຂໍ້ຕົກລົງ ວ່າດ້ວຍກຳນົດໝາຍການໃຊ້ຈ່າຍ ງົບປະມານຂອງລັດ, ການປະຢັດ ແລະ ຕ້ານການຟຸມເຟືອຍ ສະບັບເລກທີ 0200/ກງ

- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ ສະບັບເລກທີ 353/ນຍ, ລົງວັນທີ 02 ສິງຫາ 2024;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍກຳນົດໝາຍການໃຊ້ຈ່າຍງົບປະມານຂອງລັດ, ການປະຢັດ ແລະ ຕ້ານການຟຸມເຟືອຍ ສະບັບເລກທີ 0200/ກງ, ລົງວັນທີ 25 ມັງກອນ 2023;
- ອີງຕາມ ໜັງສືສະເໜີ ຂອງກົມງົບປະມານແຫ່ງລັດ ສະບັບເລກທີ 1073/ກງລ5, ລົງວັນທີ 13 ທັນວາ 2024.

ເພື່ອຕອບສະໜອງໃຫ້ການນຳໃຊ້ງົບປະມານຂອງຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ ໃຫ້ມີຄວາມສະດວກ ແລະ ສອດຄ່ອງກັບສະພາບຄວາມເປັນຈິງທາງດ້ານເສດຖະກິດ ໂດຍສະເພາະແມ່ນລາຍຈ່າຍທີ່ຕິດພັນກັບການເຄື່ອນໄຫວວຽກງານທາງການ ແລະ ລາຍຈ່າຍບໍລິຫານຂອງຂະແໜງການກ່ຽວຂ້ອງຂັ້ນສູນກາງ ແລະ ທ້ອງຖິ່ນ. ກະຊວງການເງິນ ຈຶ່ງອອກຂໍ້ຕົກລົງເພີ່ມເຕີມ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ ດັ່ງນີ້:

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ແມ່ນກຳນົດເນື້ອໃນການປັບປຸງ 4 ມາດຕາ ຄື: ມາດຕາ 7, ມາດຕາ 15 (15.1.1), ມາດຕາ 16 ແລະ ມາດຕາ 20 ຂອງ ຂໍ້ຕົກລົງ ວ່າດ້ວຍກຳນົດໝາຍການໃຊ້ຈ່າຍງົບປະມານຂອງລັດ, ການປະຢັດ ແລະ ຕ້ານການຟຸມເຟືອຍ ສະບັບເລກທີ 0200/ກງ, ລົງວັນທີ 25 ມັງກອນ 2023 ເພື່ອໃຫ້ສອດຄ່ອງກັບສະພາບຄວາມເປັນຈິງທາງດ້ານເສດຖະກິດ ທີ່ມີການເໜັງຕີງຂອງລາຄາສິນຄ້າ, ການບໍລິການ ແລະ ອັດຕາແລກປ່ຽນສູງຂຶ້ນ ແນໃສ່ຮັບປະກັນໃຫ້ການຈັດຕັ້ງປະຕິບັດວຽກງານຂອງກົງຈັກລັດມີຄວາມສະດວກ, ວ່ອງໄວ. ພ້ອມດຽວກັນນັ້ນ, ກໍ່ເພື່ອເຮັດໃຫ້ ການນຳໃຊ້ງົບປະມານບໍລິຫານຂອງລັດ ມີການປະຢັດ, ບໍ່ສ້າງໜີ້ສິນຄຸມເຄືອ ແລະ ມີປະສິດທິຜົນ.

**ມາດຕາ 2 ມາດຕາທີ່ມີການປັບປຸງ**

ບັນດາມາດຕາ ທີ່ມີການປັບປຸງເນື້ອໃນ ເພື່ອໃຫ້ສອດຄ່ອງກັບສະພາບເສດຖະກິດຕົວຈິງປະກອບມີ:

**1. ມາດຕາ 7 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສະເພາະອົງການຈັດຕັ້ງພັກ-ລັດ ທັງສູນກາງ ແລະ ທ້ອງຖິ່ນ ທີ່ນຳໃຊ້ງົບປະມານຂອງລັດ ແລະ ເງິນຊ່ວຍເຫຼືອທາງການເພື່ອການພັດທະນາ (ODA) ໃນຂອບເຂດທົ່ວປະເທດ.

**2. ມາດຕາ 15 ການເຄື່ອນໄຫວວຽກງານທາງລັດຖະການຂອງພະນັກງານ-ລັດຖະກອນ**

**15.1.1 ອັດຕາກິນ ແລະ ຄ່າພັກເຊົ່າ:**

ພະນັກງານ-ລັດຖະກອນ ໄປເຄື່ອນໄຫວວຽກງານທາງລັດຖະການ ຢູ່ພາຍໃນປະເທດ, ຈາກສູນກາງລົງໄປເຮັດວຽກຢູ່ທ້ອງຖິ່ນ ແລະ ຈາກທ້ອງຖິ່ນຂຶ້ນມາເຮັດວຽກຢູ່ສູນກາງ, ລະຫວ່າງ ແຂວງ ຫາ ແຂວງ, ລະຫວ່າງ ແຂວງ ກັບ ເມືອງ (ໃນເງື່ອນໄຂທີ່ບໍ່ສາມາດໄປກັບໄດ້) ທີ່ນໍາໃຊ້ງົບປະມານຂອງລັດ ແລະ ເງິນຊ່ວຍເຫຼືອທາງການເພື່ອການພັດທະນາ ໃຫ້ຄິດໄລ່ ດັ່ງນີ້:

**ຫົວໜ່ວຍ: ກີບ**

| ລ/ດ | ຕໍາແໜ່ງ | ອັດຕາກິນ/ຄົນ/ວັນ | ຄ່າພັກເຊົ່າ/ຄົນ/ຄືນ |
|---|---|---|---|
| 1 | ຕໍາແໜ່ງບໍລິຫານການນໍາລະດັບສູງ (ຊັ້ນ 6 ຂັ້ນ 5 ຫາ ຂັ້ນ 7) | 250,000 | ປະຕິບັດ ຕາມຕົວຈິງ |
| 2 | ຕໍາແໜ່ງບໍລິຫານການນໍາລະດັບສູງ (ຊັ້ນ 6 ຂັ້ນ 3 ຫາ ຂັ້ນ 4) | 250,000 | |
| 3 | ຕໍາແໜ່ງບໍລິຫານການນໍາລະດັບສູງ (ຊັ້ນ 6 ຂັ້ນ 1 ຫາ ຂັ້ນ 2) | 250,000 | 350,000 |
| 4 | ຕໍາແໜ່ງບໍລິຫານລະດັບສູງ (ປະເພດ 1) | 250,000 | 350,000 |
| 5 | ຕໍາແໜ່ງບໍລິຫານລະດັບສູງ (ປະເພດ 2 ແລະ 3) | 250,000 | 350,000 |
| 6 | ຕໍາແໜ່ງບໍລິຫານລະດັບກາງ (ປະເພດ 4 ລົງມາ) | 250,000 | 350,000 |

**3. ມາດຕາ 16 ການຈັດຊື້ປີ້ເຮືອບິນໄປເຄື່ອນໄຫວທາງລັດຖະການຢູ່ ພາຍໃນ ແລະ ຕ່າງປະເທດ**

ເພື່ອຮັບປະກັນບໍ່ໃຫ້ລາຄາຊື້ປີ້ເຮືອບິນໄປເຄື່ອນໄຫວວຽກງານທາງລັດຖະການຢູ່ພາຍໃນ ແລະ ຕ່າງປະເທດ ສູງເກີນໄປ ເມື່ອທຽບກັບລາຄາຕົວຈິງຂອງຕະຫຼາດໃນແຕ່ລະໄລຍະ ໃຫ້ປະຕິບັດ ດັ່ງນີ້:

16.1 ກະຊວງ, ອົງການ ແລະ ທ້ອງຖິ່ນ ຕ້ອງມີການປະມູນແບບເປີດກວ້າງໃນຕົ້ນປີ ເພື່ອຄັດເລືອກເອົາບໍລິສັດທີ່ສາມາດສະໜອງລາຄາປີ້ເຮືອບິນຄົງທີ່ ຫຼື ເໜັງຕີງ ຕາມລາຄາຕະຫຼາດໃນແຕ່ລະໄລຍະ. ການປະມູນຄັດເລືອກເອົາບໍລິສັດ ຕ້ອງປະມູນເປັນແຕ່ລະປີ ຕາມແຜນງົບປະມານປະຈໍາປີ (ຕ້ອງເປັນບໍລິສັດທີ່ຢູ່ໃນ ລະບົບອາກອນມູນຄ່າເພີ່ມຕາມກົດໝາຍກໍານົດ);

16.2 ກະຊວງ, ອົງການ ແລະ ທ້ອງຖິ່ນ ຕ້ອງຈັດລຽງບູລິມະສິດແຜນການເຄື່ອນໄຫວໄປວຽກທາງລັດຖະການຢູ່ ພາຍໃນ ແລະ ຕ່າງປະເທດ ທີ່ຈະນໍາໃຊ້ເຮືອບິນ ໃຫ້ສອດຄ່ອງກັບແຜນງົບປະມານທີ່ໄດ້ຮັບເປັນແຕ່ລະໄລຍະ ໂດຍບໍ່ໃຫ້ເກີນແຜນງົບປະມານປະຈໍາປີ ທີ່ຕົນໄດ້ຮັບ, ເດັດຂາດບໍ່ໃຫ້ສ້າງໜີ້ສິນໃນລາຍຈ່າຍດັ່ງກ່າວ, ຖ້າຫາກປະຕິບັດເກີນງົບປະມານ ແລະ ເກີດມີໜີ້ສິນ ແມ່ນມອບໃຫ້ພາກສ່ວນກ່ຽວຂ້ອງຮັບຜິດຊອບຕໍ່ໜີ້ສິນດັ່ງກ່າວ;

16.3 ການປະມູນຈັດຊື້ປີ້ເຮືອບິນ ຕ້ອງໃຫ້ບູລິມະສິດບໍລິສັດພາຍໃນ ແລະ ສາມາດເຊື່ອມຕໍ່ກັບແຕ່ລະສາຍການບິນທັງພາຍໃນ ແລະ ຕ່າງປະເທດ ເຊິ່ງປະກອບມີ:

ກ. ສາຍການບິນລາວ;

ຂ. ສາຍການບິນລາວເດີນອາກາດ;

ຄ. ສາຍການບິນລ້ານຊ້າງສາກົນ;

16.4 ການຈັດຊື້ປີ້ເຮືອບິນນໍາບໍລິສັດ ຕ້ອງປະຕິບັດຕາມສັນຍາທີ່ມອບໃນເງື່ອນໄຂຊະນະການປະມູນ ແລະ ຢູ່ໃນຂອບແຜນງົບປະມານປະຈໍາປີຂອງຕົນ, ເຊິ່ງເປັນການຊໍາລະງົບປະມານຕາມແຜນການເຄື່ອນໄຫວວຽກງານຕົວຈິງໃນແຕ່ລະໄລຍະ, ບໍ່ໃຫ້ຄິດໄລ່ເປັນລາຄາເງິນໂອນທີ່ເຮັດໃຫ້ລາຄາສູງເກີນລາຄາຕະຫຼາດ;

16.5 ການປະມູນຈັດຊື້ປີ້ເຮືອບິນ ໃຫ້ລວມສູນຢູ່ບ່ອນດຽວ ເຊັ່ນ: ຫ້ອງການ, ກົມແຜນການ ແລະ ການເງິນ ຫຼື ໜ່ວຍງານຮັບຜິດຊອບ ທີ່ໄດ້ຮັບມອບໝາຍຈາກ ກະຊວງ, ອົງການ ແລະ ທ້ອງຖິ່ນ ເພື່ອສະດວກໃນການສັງລວມ, ຕິດຕາມ ແລະ ຄວບຄຸມການໃຊ້ຈ່າຍງົບປະມານບ້ອງດັ່ງກ່າວ;

16.6 ການເຊົ່າເໝົາເຮືອບິນ ສໍາລັບການໄປເຄື່ອນໄຫວວຽກທາງການຢູ່ພາຍໃນ ແລະ ຕ່າງປະເທດ ຂອງການນໍາຂັ້ນສູງ ໃຫ້ປະຕິບັດຕາມການຕົກລົງຂອງລັດຖະບານ ແລະ ມີການຈັດຊື້-ຈັດຈ້າງຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງກໍານົດໄວ້;

**4. ມາດຕາ 20 ລາຍຈ່າຍບໍລິຫານທີ່ນໍາໃຊ້ທຶນຊ່ວຍເຫຼືອທາງການເພື່ອການພັດທະນາ (ຊກພ)**

ລາຍຈ່າຍໄປວຽກທາງການພາຍໃນ ຫຼື ຕ່າງປະເທດ, ກອງປະຊຸມ, ສໍາມະນາ ທີ່ບັນດາອົງການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ຂັ້ນສູນກາງ ແລະ ອົງການຈັດຕັ້ງຂອງລັດ ຂັ້ນທ້ອງຖິ່ນ ເປັນຜູ້ຄຸ້ມຄອງ ແລະ ຜູ້ໃຫ້ທຶນຊ່ວຍເຫຼືອທາງການເພື່ອການພັດທະນາ ເປັນຜູ້ຄຸ້ມຄອງ ໃຫ້ປະຕິບັດຄືກັນກັບການນໍາໃຊ້ແຫຼ່ງທຶນງົບປະມານຂອງລັດ ຕາມນິຕິກໍາຂອງກະຊວງການເງິນວາງອອກໃນແຕ່ລະໄລຍະ.

20.1 ລາຍຈ່າຍໄປວຽກທາງການພາຍໃນ ຫຼື ຕ່າງປະເທດ, ກອງປະຊຸມສໍາມະນາ ທີ່ຜູ້ໃຫ້ທຶນຄຸ້ມຄອງເອງແມ່ນໃຫ້ປະຕິບັດເອກະພາບກັນກັບນິຕິກໍາຂອງກະຊວງການເງິນວາງອອກ ໃນແຕ່ລະໄລຍະ. ພາຍຫຼັງ ສໍາເລັດການໄປເຄື່ອນໄຫວວຽກງານແລ້ວ ໃຫ້ສະຫຼຸບລາຍຈ່າຍຕາມໃບບິນເກັບເງິນໂດຍຖືກຕ້ອງຕາມລະບຽບຄຸ້ມຄອງການເງິນຂອງກະຊວງການເງິນ ແລະ ຜູ້ໃຫ້ທຶນ;

20.2 ກໍລະນີຜູ້ໃຫ້ທຶນເປັນເຈົ້າພາບຈັດກອງປະຊຸມ, ສໍາມະນາ, ຝຶກອົບຮົມ ແມ່ນໃຫ້ປະຕິບັດການຄິດໄລ່ເງິນ ສໍາລັບອັດຕາກິນ ແລະ ຄ່າພັກເຊົາ ເອກະພາບຕາມນິຕິກໍາຂອງກະຊວງການເງິນວາງອອກໃນແຕ່ລະໄລຍະ ຍົກເວັ້ນປ້າຍຄໍາຂວັນ ແລະ ສະຖານທີ່ກອງປະຊຸມ ໃຫ້ປະຕິບັດຕາມການກໍານົດ ຫຼື ຕາມເງື່ອນໄຂສັນຍາ ຂອງຜູ້ໃຫ້ທຶນ;

20.3 ກໍລະນີຜູ້ໃຫ້ທຶນ ເປັນຜູ້ຄຸ້ມຄອງທຶນ ສໍາລັບໂຄງການ ຊກພ ໂດຍສະເພາະແມ່ນໂຄງການຊ່ວຍເຫຼືອລ້າດ້ານວິຊາການ (TA) ແມ່ນສາມາດນໍາໃຊ້ລະບຽບການຂອງຕົນໄດ້ ຕາມຄວາມເໝາະສົມ ແຕ່ຕ້ອງໃຫ້ມີຄວາມສະເໝີພາບເທົ່າທຽມກັບຂໍ້ຕົກລົງສະບັບນີ້ຂຶ້ນໄປ.

**ມາດຕາ 3 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມງົບປະມານແຫ່ງລັດ, ຄັງເງິນແຫ່ງຊາດ ແລະ ຫົວໜ່ວຍງົບປະມານຂັ້ນສູນກາງ ແລະ ທ້ອງຖິ່ນ ເປັນເຈົ້າການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ, ມີການປະຢັດ ແລະ ມີປະສິດທິຜົນ.

ໃນການຈັດຕັ້ງປະຕິບັດຕົວຈິງ ຫາກພົບບັນຫາທີ່ບໍ່ຈະແຈ້ງ ຫຼື ມີຄວາມຫຍຸ້ງຍາກໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ຮີບຮ້ອນປະສານ ກົມງົບປະມານແຫ່ງລັດ ຄືນໂດຍໄວ ເພື່ອຮີບຮ້ອນຄົ້ນຄວ້າ, ລາຍງານ ແລະ ປັບປຸງແກ້ໄຂໃຫ້ທັນເວລາ.

**ມາດຕາ 4 ຜົນສັກສິດ**

ບັນດາເນື້ອໃນທີ່ກໍານົດໃນນິຕິກໍາອື່ນ ທີ່ຂັດຂໍ້ຕົກລົງສະບັບນີ້ ແມ່ນຖືກຍົກເລີກ; ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີລົງລາຍເຊັນ ແລະ ເລີ່ມນໍາໃຊ້ ແຕ່ງວດ 01 ປີ 2025 ເປັນຕົ້ນໄປ.

**ລັດຖະມົນຕີ**

ກະຊວງການເງິນ
ລັດຖະມົນຕີ



ສັນຕິພາບ ພົມວິຫານ